ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ພະແນກສາທາລະນະສຸກແຂວງອຸດົມໄຊ
ໂຮງໝໍແຂວງ

ເລກທີ່..1423..../
ອຸດົມໄຊ, ວັນທີ...12/.7/.2018...

# ບົດລາຍງານ

## ການຜ່າຕັດແກ່ນຕາຂຸ້ນ ແລະ ຜ່າຕັດແປງໜັງຕາ
## ທີ່ແຂວງອຸດົມໄຊ, ໄຊຍະບູລີ ແລະ ນະຄອນຫຼວງວຽງຈັນ
## ເດືອນ ມິຖຸນາ 2018




ໂດຍການຮ່ວມມືລະຫວ່າງ ໂຮງໝໍແຂວງອຸດົມໄຊ, ໄຊຍະບູລີ, ມະໂຫສົດ ແລະ ໂຮງໝໍ 103
ຮ່ວມກັບ
ໂຮງໝໍສາກົນບຳລຸງລາດ ປະເທດໄທ
ແລະ
ມູນນິທິຟື້ນຟູສຸຂະພາບລາວ

ກິດຈະກຳຜ່າຕັດແກ່ນຕາຂຸ້ນດ້ວຍເຄື່ອງມືທັນສະໄໝ ເປັນຄັ້ງທີ່ 2 ແລະ ການຜ່າຕັດແປງໜັງຕາ ເປັນຄັ້ງທີ່ 4 ທີ່ໄດ້ດຳເນີນຢູ່ລາວ ໂດຍໄດ້ຮັບທຶນສະໜັບສະໜູນຊ່ວຍເຫຼືອລ້າ ຈາກມູນນິທິຟື້ນຟູສຸຂະພາບ ແລະ ໂຮງໝໍສາກົນບຳລຸງລາດ ປະເທດໄທ.

## I. <u>ຈຸດປະສົງ</u>

- ຫຼຸດຜ່ອນຈຳນວນຕາບອດ ທີ່ສາມາດຫຼີກລ້ຽງໄດ້ຢູ່ລາວ
- ເພີ່ມປະສິດທິພາບ ແລະ ຄຸນນະພາບ ໃນການບໍລິການກວດ ແລະ ປິ່ນປົວຕາຢູ່ 2 ແຂວງ ອຸດົມໄຊ ແລະ ຊຽງຂວາງ.
- ຊ່ວຍຮັກສາສາຍຕາ ແລະ ສະພາບຊີວິດໃຫ້ດີຂຶ້ນ
- ຊ່ວຍພັດທະນາສີມືຂອງທ່ານໝໍຕາລາວ

## II. <u>ສະຖານທີ່ ບໍລິການ ແລະ ເວລາ</u>

ຄັ້ງນີ້ໄດ້ດຳເນີນຢູ່ 4 ສະຖານທີ່ຄື:

- ຜ່າຕັດແກ່ນຕາຂຸ້ນ ຢູ່ໂຮງໝໍແຂວງອຸດົມໄຊ: ວັນທີ 2-8/6/2018
- ຜ່າຕັດແກ່ນຕາຂຸ້ນຢູ່ 2 ໂຮງໝໍເມືອງ (ແກ່ນທ້າວ ແລະ ປາກລາຍ) ແຂວງໄຊຍະບູລີ: ວັນທີ 11-16/6/2018
- ຜ່າຕັດແປງໜັງຕາໃຫ້ແກ່ເດັກ ຢູ່ໂຮງໝໍມະໂຫສົດ: ວັນທີ 28/6/2018
- ຜ່າຕັດແປງໜັງຕາໄຟໄໝ້ ຢູ່ໂຮງໝໍ 103: ວັນທີ 29/6/2018

## III. <u>ທີມງານ</u>

ລວມທີມງານທັງໝົດ 15 ທ່ານ, ຊຶ່ງປະກອບມີ

1. **ຈາກໂຮງໝໍແຂວງອຸດົມໄຊ** (6):
   - ແພດຊ່ຽວຊານຕາ 2
   - ພະຍາບານຕາ (ຜູ້ຊ່ວຍ) 4
2. **ໂຮງໝໍໄຊຍະບູລີ** (4)
   - ແພດຊ່ຽວຊານຕາ 1
   - ນັກສຶກສາແພດຕາຫຼັງມະຫາ 1
   - ພະຍາບານຕາ (ຜູ້ຊ່ວຍ) 2
3. **ຈາກປະເທດໄທ** (4):
   - ແພດຊ່ຽວຊານສະເພາະທາງ 1
   - ແພດຕິດຕາມຊ່ຽວຊານສະເພາະທາງ 1
   - ນັກສຶກສາອາສາສະໝັກ 2
4. **ມູນນິທິຟື້ນຟູສຸຂະພາບລາວ** (1):
   - ຜູ້ປະສານງານ 1

## IV. <u>ເຄື່ອງມືອຸປະກອນ ແລະ ຢາ</u>

ກິດຈະກຳໃນຄັ້ງນີ້ ໄດ້ນຳໃຊ້ເຄື່ອງມືອຸປະກອນ ແລະ ຢາ ທີ່ທັນສະໄໝ ແລະ ຄຸນນະພາບທີ່ດີ, ປະກອບມີ:

1. ເຄື່ອງມື ແລະ ອຸປະກອນສຳລັບຜ່າຕັດແກ່ນຕາຂຸ້ນ ແມ່ນນຳມາຈາກ USA
2. ເຄື່ອງມື ແລະ ອຸປະກອນສຳລັບຜ່າຕັດແປງໜັງຕາ ແມ່ນນຳມາຈາກ ປະເທດໄທ.

## V. <u>ພາກສ່ວນຮັບຜິດຊອບ</u>

**1. ໂຮງໝໍແຂວງອຸດົມໄຊ, ໄຊຍະບູລີ, ໂຮງໝໍມະໂຫສົດ ແລະ ໂຮງໝໍ 103**

– ດຳເນີນເອກະສານ ແລະ ໃບອະນຸຍາດແຕ່ລະພາກສ່ວນທີ່ກ່ຽວຂ້ອງ
– ສ້າງທີມງານໃນການກະກຽມ ແລະ ນັດໝາຍຄົນເຈັບ
– ສະໜອງສະຖານທີ່, ສິ່ງເອື້ອຍອຳນວຍ ໃນການກວດ ແລະ ປິ່ນປົວຄົນເຈັບ

**2. ໂຮງໝໍສາກົນ ບຳລຸງລາດ, ປະເທດໄທ**

– ສະໜັບສະໜູນຊ່ຽວຊານສະເພາະທາງ
– ສະໜອງເຄື່ອງມືອຸປະກອນ ແລະ ຢາ ສຳລັບຜ່າຕັດແປງໜັງຕາ
– ສະໜອງທຶນໃຫ້ແກ່ທີມງານໃນການເດີນທາງ, ຄ່າຢາປິ່ນປົວຄົນເຈັບ ແລະ ອື່ນໆ ທີ່ຈຳເປັນ.

**3. ມູນນິທິຟື້ນຟູສຸຂະພາບລາວ**

– ເປັນຜູ້ຮັບຜິດຊອບສະໜອງເຄື່ອງມືອຸປະກອນ ແລະ ຢາ ທັງໝົດໃນການຜ່າຕັດແກ່ນຕາຂຸ້ນ.
– ສະໜອງງົບປະມານຄ່າເດີນທາງ, ທີ່ພັກຂອງທີມງານ ແລະ ຢາສະຫຼົບ ໃຫ້ແກ່ຄົນເຈັບ

## VI. <u>ວິທີການ</u>

– ໄດ້ໃຊ້ເວລາທັງໝົດ 6 ເດືອນໃນການກະກຽມ ຄົນເຈັບ, ທີມງານ, ສະຖານທີ່ ແລະ ທຶນສະໜັບ ສະໜູນ.
– ທີມງານແພດຕາ ແຂວງອຸດົມໄຊ ໄດ້ດຳເນີນການຜ່າຕັດແກ່ນຕາຂຸ້ນ ຢູ່ໂຮງໝໍແຂວງ ໂດຍນຳໃຊ້ 2 ເຕັກນິກໃນການຜ່າຕັດ phaco ແລະ MSICS.
– ແພດຊ່ຽວຊານຕາຈາກແຂວງອຸດົມໄຊ ໄດ້ຮ່ວມກັບທີມງານແພດຕາ ແຂວງໄຊຍະບູລີ ດຳເນີນການຜ່າຕັດແກ່ນຕາຂຸ້ນ ຢູ່ 2 ເມືອງ (ແກ່ນທ້າວ ແລະ ປາກລາຍ) ແຂວງໄຊຍະບູລີ ໂດຍນຳໃຊ້ 2 ເຕັກນິກການຜ່າຕັດ phaco and MSICS.
– ທີມງານແພດລາວ ຈາກອຸດົມໄຊ, ມະໂຫສົດ ແລະ ໂຮງໝໍທະຫານ 103 (ແພດຊ່ຽວຊານຕາ, ທ່ານໝໍຢາສະຫຼົບ, ນັກສຶກສາ ແລະ ພະຍາບານຊ່ວຍ) ຮ່ວມວຽກກັບທີມງານແພດຕາ ຈາກປະເທດໄທ ແລະ ມູນນິທິຟື້ນຟູສຸຂະພາບລາວ ໃຫ້ການຜ່າຕັດແປງໜັງຕາໃຫ້ແກ່ຄົນເຈັບທີ່ຖືກໄຟໄໝ້ ແລະ ເດັກທີ່ມີໜັງຕາຈ່ອງດຶງ.
– ການຜ່າຕັດແກ່ນຕາຂຸ້ນ ແມ່ນໃສ່ຢາມຶນສະເພາະທີ່
– ສ່ວນການຜ່າຕັດແປງໜັງຕາ ແມ່ນໃສ່ຢາສະຫຼົບທັງ 2 ກໍລະນີ
– ໄດ້ດຳເນີນການຜ່າຕັດ ດ້ວຍເຕັກນິກ ດັ່ງນີ້:
    - Most cataract cases were performed by Phaco and fewer cases by MSICS techniques.
    - Severe eyelid correction or reconstruction surgery as well as 2 additional cases were provided with proper operating procedure and quality medicine.

– ແພດຊ່ຽວຊານຕາ ແລະ ທ່ານໝໍຕາລາວ ໄດ້ເຂົ້າຮ່ວມຕິດຕາມ ແລະ ຮັບຟັງການອະທິບາຍໃນກິດຈະກຳຄັ້ງນີ້.

## VII. ຜົນການເຄື່ອນໄຫວ

### 1. ການເພີ່ມຄວາມຮູ້ ໂດຍການຝຶກອົບຮົມປະຕິບັດຕົວຈິງກັບທີ່

ສໍາລັບເຕັກນິກການຜ່າຕັດແກ່ນຕາຂຸ້ນ ໄດ້ໃຫ້ການແນະນໍາ ແລະ ສິດສອນກັບທີ່ ໃຫ້ແກ່ແພດຊ່ຽວຊານຕາ ແລະ ນັກສຶກສາແພດຕາຫຼັງມະຫາ ແຂວງໄຊຍະບູລີ, ເຕັກນິກການຜ່າຕັດແກ່ນຕາຂຸ້ນ ດ້ວຍເຄື່ອງ Phaco ແລະ ເຕັກນິກ MSICS, ສອນໂດຍ ດຣ. ເພັດສະໝອນ.

ແພດຊ່ຽວຊານສະເພາະທາງ ໄດ້ສິດສອນ ແລະ ໃຫ້ຄໍາແນະນໍາເຕັກນິກການຜ່າຕັດ ໃຫ້ແກ່ແພດຕາລາວ ຜູ້ເຂົ້າຮ່ວມ.

### 2. ຜົນການຜ່າຕັດແກ່ນຕາຂຸ້ນ

ລວມຈໍານວນຄົນເຈັບກວດຕາທັງໝົດ 567 ຄົນ ແລະ ໄດ້ຮັບການຜ່າຕັດແກ່ນຕາຂຸ້ນທັງມົດ 100 ກໍລະນີ:

- By Phacoemulsification: 69 cases
- By SICS: 31 cases
- Complication intra-operative: 02 cases
- Complication post-operative: 01 cases

(ມີຈໍານວນ ແລະ ລາຍຊື່ລະອຽດຂັດທ້າຍ)

### 3. ຜົນການຜ່າຕັດແປງໜັງຕາ

2 ຄົນເຈັບພະຍາດໜັງຕາຮຸ່ນແຮງ, ຊຶ່ງບໍ່ສາມາຮັບການປິ່ນປົວໄດ້ຈາກແພດຕາລາວ
ໄດ້ຮັບການປິ່ນປົວ:

- 1 ເດັກຍິງ ຊຶ່ງເປັນພະຍາດໜັງຕາປີ້ນອອກນອກ retraction ectropion, ໄດ້ຮັບການຜ່າຕັດດ້ວຍເຕັກນິກ Z-plasty technique
- 1 ຜູ້ຊາຍຖືກໄຟໄໝ້ສູນເສຍໜັງຕາຮຸ່ນແຮງ, ໄດ້ຮັບການຜ່າຕັດດ້ວຍເຕັກນິກ repairing with full thickness skin graft + Tarsolaphy on both eyes.

ຫຼັງຜ່າຕັດແມ່ນໄດ້ຮັບຜົນດີທັງໝົດ.

## VIII. ງົບປະມານ-ລາຍຈ່າຍ

ລວມລາຍຈ່າຍທັງໝົດສໍາລັບກິດຈະກໍາຄັ້ງນີ້ **26,550 USD** (ຊາວຫົກພັນຫ້າຮ້ອຍຫ້າສິບ ໂດລາສະຫະລັດ), ຊຶ່ງໄດ້ຮັບການຊ່ວຍເຫຼືອຈາກ:

1. ມູນນິທິຟື້ນຟູສຸຂະພາບລາວ: $23,220
2. ແພດຊ່ຽວຊານສະເພາະທາງທີ່ມາຈາກໂຮງໝໍ ສາກົນບໍາລຸງລາດ ປະເທດໄທ: $3,330

**ງົບປະມານ-ລາຍຈ່າຍຕົວຈິງປະກອບມີ:**

| | |
|---|---|
| – ອຸປະກອນການແພດ, ຢາ, ດໍາເນີນການຜ່າຕັດ ແລະ ຫຼັງຜ່າຕັດ | $20,130 |
| – ຄ່າເດີນທາງຂອງທີມງານ ແລະ ຄົນເຈັບ | $4,950 |
| – ຄ່າໂຮງແຮມ ທີ່ພັກຂອງທີມງານແພດ ແລະ ຄົນເຈັບ | $450 |
| – ຄ່າອາຫານ ແລະ ເຄື່ອງດື່ມຂອງແພດ ແລະ ຄົນເຈັບ | $820 |
| – ອື່ນໆ | $200 |

(ລາຍລະອຽດເອກະສານຂັດຕິດ)

## IX. ຈຸດດີ, ຈຸດອ່ອນ ຂໍ້ຄົງຄ້າງ ແລະ ຂໍ້ສະເໜີ

**1. ຈຸດດີ**

- ໄດ້ຮັບການຮ່ວມມືເປັນຢ່າງດີ ຈາກທຸກພາກສ່ວນ ໂຮງໝໍແຂວງອຸດົມໄຊ, ໄຊຍະບູລີ, ມະໂហສົດ, ໂຮງໝໍທະຫານ 103, ໂຮງໝໍ ສາກົນບຳລຸງລາດ ແລະ ມູນນິທິຟື້ນຟູສຸຂະພາບລາວ.
- ຄົນເຈັບຜູ້ທີ່ມີບັນຫາໜັງຕາຮຸ່ນແຮງ ຊຶ່ງດ້ອຍໂອກາດ ໄດ້ຮັບການຜ່າຕັດ ແລະ ປິ່ນປົວ.
- ເປັນກິດຈະກຳທີ່ສຳຄັນໜຶ່ງ ໃນການຊ່ວຍຫຼຸດຜ່ອນຈຳນວນຄົນຕາບອດຢູ່ລາວ ແລະ ຊ່ວຍເພີ່ມປະສິດທິພາບຂອງຄົນເຈັບທີ່ໄດ້ຮັບການປິ່ນປົວ.
- ແພດຕາລາວ ໄດ້ຮັບບາງບົດຮຽນສຳຄັນ ໃນການຜ່າຕັດແປງໜັງຕາ ຈາກແພດສະເພາະທາງປະເທດໄທ.

**2. ຈຸດອ່ອນ**

- ຄັ້ງນີ້ໄດ້ນຳໃຊ້ ແລະ ດຳເນີນຢູ່ ຫຼາຍສະຖານທີ່ ຊຶ່ງພົບຂໍ້ຫຍຸ້ງຍາກໃນການກະກຽມ, ການເດີນທາງ.
- ທີມງານແພດຕາແຂວງໄຊຍະບູລີ ຍັງຈຳກັດໃນການຜ່າຕັດແກ່ນຕາຂຸ້ນ ໂດຍໃຊ້ເຕັກນິກ Phaco

**3. ຂໍ້ສະເໜີແນະ**

- ສືບຕໍ່ໃຫ້ການຊ່ວຍເຫຼືອແກ່ຄົນເຈັບຜູ້ທຸກຍາກ ແລະ ຕ້ອງການ ຢູ່ ສປປ ລາວ.

## X. ແຜນການຕໍ່ໜ້າ

**1. ແຜນກິດຈະກຳ**

- ຜ່າຕັດແກ່ນຕາຂຸ້ນດ້ວຍເຕັກນິກ Phaco
- ຜ່າຕັດແປງໜັງຕາ ແລະ ແຜແປ້ວ
- ເພີ່ມຄວາມຮູ້ໃຫ້ແກ່ແພດຕາລາວ

**2. ສະຖານທີ່**

- ໂຮງໝໍແຂວງອຸດົມໄຊ ຫຼື ແຂວງໄຊຍະບູລີ

**3. ວັນທີ ແລະ ເວລາ**

- ໃນທ້າຍປີ 2018, ຊຶ່ງຈະໄດ້ພິຈາລະນາໂດຍມູນນິທິ LRF

ຜູ້ອຳນວຍການໂຮງໝໍແຂວງອຸດົມໄຊ

ດຣ.ສຸວັນທອງ ແສນວັນນະຄຳ
Dr. Souvanthong SENVANAKHAM

ຜູ້ລາຍງານ

ດຣ.ເພັດສະໝອນ ອິນດາລາ
Phetsamone INDARA MD.

# ເອກະສານຂັດຕິດ